**ມິຊຊາອາທິດທີ 14 ກຳນົດທຳມະດາປີ A**

**ວັນທີ 5 ກໍລະກົດ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 11, 25-30**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວວ່າ: "ໂອພຣະບິດາເຈົ້າສະຫວັນແລະແຜ່ນດິນ! ລູກຂໍສັນລະເສີນພຣະອົງ ດ້ວຍໄດ້ຊົງປິດບັງສິ່ງເຫລົ່ານີ້ແກ່ບັນດາຜູ້ສະຫລາດຫລັກແຫລມ ແລະໄດ້ຊົງໄຂສຳແດງແກ່ບັນດາຜູ້ຕ່ຳຕ້ອຍດ້ອຍປັນຍາ. ແມ່ນແລ້ວ! ໂອພຣະບິດາເຈົ້າ, ພຣະອົງຊົງພໍພຣະໄທດັ່ງນີ້. ພຣະບິດາໄດ້ຊົງມອບທຸກສິ່ງໃຫ້ແກ່ລູກແລະບໍ່ມີໃຜຮູ້ພຣະບຸດເວັ້ນແຕ່ພຣະບິດາ, ດັ່ງດຽວກັນ ບໍ່ມີໃຜຮູ້ພຣະບິດາເວັ້ນແຕ່ພຣະບຸດແລະຜູ້ພຣະບຸດຊົງພໍພຣະໄທໄຂສຳແດງໃຫ້ຮູ້ເທົ່ານັ້ນ"

"ພວກເຈົ້າທັງຫລາຍຜູ້ທົນທຸກແລະແບກໜັກ, ຈົ່ງມາຫາເຮົາເຖີດ, ແລະເຮົາຈະທຸເລົາເບົາໃຈພວກເຈົ້າ. ຈົ່ງຮັບແບກເອົາແອກຂອງເຮົາແລະກາຍເປັນລູກສິດເຮົາ, ຍ້ອນວ່າເຮົາມີໃຈອ່ອນຫວານແລະສຸພາບ, ແລະພວກເຈົ້າຈະໄດ້ຮັບຄວາມທຸເລົາບັນເທົາໃຈ. ແມ່ນແລ້ວ ແອກຂອງເຮົາແບກໄດ້ງ່າຍ ແລະຂອງທີ່ຕ້ອງແບກນັ້ນ ກໍເບົາດ້ວຍ."

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ມທ 11, 25-30**

ວາຈາພຣະເຈົ້າວັນນີ້ແມ່ນຢູ່ຕອນທ້າຍຂອງບົດທີ 11 ໃນພຣະວໍລະສານໂດຍນັກບຸນມັດເທວ. ຖ້າພວກເຮົາອ່ານຕອນຕົ້ນຂອງບົດທີ 11 ກໍຈະເຫັນວ່າພາລະກິດແຫ່ງການປະກາດຂ່າວດີຂອງພຣະເຢຊູເຈົ້າກໍາລັງພົບກັບບັນຫາແລະຄວາມຫຍຸ້ງຍາກ. ຍ້ອນຢວງບາບຕິສຕາກໍຖືກຄຸກແລະທ່ານເອງກໍບໍ່ຮູ້ວ່າພຣະເຢຊູເຈົ້າຜູ້ທີ່ກໍາລັງປະກາດຂ່າວດີເລື່ອງອານາຈັກສະຫວັນນີ້ແມ່ນພຣະເມດຊີອາຜູ້ທີ່ທຸກຄົນລໍຖ້າບໍ? ອີກຝ່າຍໜຶ່ງຝູງຊົນກໍບໍ່ເຊື່ອໃນຄໍາເທດສອນຂອງພຣະເຢຊູເຈົ້າແລະທ່ານຢວງບັບຕິສຕາດ້ວຍ. ພຣະເຢຊູເຈົ້າເອງກໍໄດ້ຕິຕຽນເມືອງໂຄໂຣຊາອິນແລະເບັດໄຊດາທີ່ບໍ່ຍອມເປັນທຸກກັບໃຈແລະຮັບຄໍາເທດສອນຂອງພຣະອົງ. ຕໍ່ໜ້າອຸປະສັກນີ້ພຣະເຢຊູເຈົ້າໄດ້ພາວະນາສັນລະເສີນພຣະບິດາທີ່ໄດ້ຊົງປົດບັງເລື່ອງເຫລົ່ານີ້ (ອັນແມ່ນອານາຈັກສະຫວັນ) ໃຫ້ບັນດາຜູ້ສະຫລາດຫລັກແຫລມແລະໄດ້ຊົງເປີດເຜີຍແກ່ຜູ້ຕໍ່ານ້ອຍດ້ອຍປັນຍາ(ຄືຜູ້ທີ່ຕິດຕາມພຣະເຢຊູເຈົ້າ, ພວກລູກສິດຂອງພຣະອົງ). ເປັນບົດພຣະວໍລະສານທີ່ພວກເຮົາໄດ້ຟັງວັນນີ້. ເປັນຫຍັງພຣະບິດາເຈົ້າບໍ່ໄຂສໍາແດງໃຫ້ທຸກຄົນຮູ້ຈັກເລື່ອງອານາຈັກສະຫວັນ ແຕ່ຊົງໄຂສໍາແດງໃຫ້ແຕ່ຜູ້ຕໍ່ານ້ອຍດ້ອຍປັນຍາ ແລະຊົງປົດບັງບໍ່ໃຫ້ບັນດາຜູ້ສະຫລຽວສະຫລາດຮູ້ຈັກ? ເພື່ອຈະຕອບຄໍາຖາມນີ້ໄດ້ກ່ອນອື່ນໝົດພວກເຮົາຕ້ອງເຂົ້າໃຈວ່າ ຜູ້ຕໍ່ານ້ອຍດ້ອຍປັນຍາທີ່ພຣະເຢຊູເຈົ້າກ່າວນີ້ແມ່ນໃຜ? ແລະຜູ້ສະຫລຽວສະຫລາດນັ້ນແມ່ນໃຜ? ຜູ້ຕໍ່ານ້ອຍດ້ອຍປັນຍາທີ່ພຣະເຢຊູເຈົ້າກ່າວນີ້ແມ່ນຜູ້ທີ່ມີຈິດໃຈຍາກຈົນ, ສຸພາບອ່ອນຫວານ. ດັ່ງທີ່ພວກເຮົາໄດ້ຟັງໃນບົດເທດບົນພູເຂົາກ່ຽວກັບຄວາມສຸກແປດປະການ. ແລະປະການທີໜຶ່ງນັ້ນແມ່ນ: "ບຸນມະຫາລາບແກ່ຜູ້ມີໃຈຍາກຈົນ ດ້ວຍວ່າອານາຈັກສະຫວັນເປັນຂອງໆເຂົາ" (ມທ 5, 3). ຜູ້ມີໃຈຍາກຈົນ, ສຸພາບອ່ອນຫວານນີ້ແມ່ນຜູ້ທີ່ໄວ້ໃຈໃນພຣະເຢຊູເຈົ້າແລະຕິດຕາມພຣະອົງໄປ. ຫລືເວົ້າອີກຢ່າງແມ່ນຜູ້ເປັນສິດຂອງພຣະອົງນັ້ນເອງ. ຍ້ອນພຣະອົງເປັນຜູ້ທີ່ມີໃຈອ່ອນຫວານແລະສຸພາບ. ສ່ວນຜູ້ສະຫລຽວສະຫລາດນັ້ນແມ່ນຜູ້ທີ່ຮູ້ຈັກພຣະທໍາບັນຍັດແຕ່ບໍ່ປະຕິບັດ. ໃນສະໄໝຂອງພຣະເຢຊູເຈົ້າແມ່ນພວກຟາຣີເຊວ, ອາຈານພຣະຄໍາພີແລະນັກກົດໝາຍ.

**ພາວະນາ**

ໂອພຣະເຈົ້າ, ລູກຂໍຂອບພຣະຄຸນພຣະອົງທີ່ໄດ້ສອນລູກໃຫ້ເຂົ້າໃຈວ່າ ທຸກຄົນທີ່ເຊື່ອແລະຕິດຕາມພຣະເຢຊູເຈົ້ານີ້ແມ່ນຜູ້ມີບຸນແລະມີຄວາມສຸກ. ຄວາມສຸກນີ້ບໍ່ໄດ້ມາຈາກອໍານາດບາລາມີ, ຄວາມຮັ່ງມີຢູ່ໃນໂລກນີ້, ແຕ່ມາຈາກພຣະເຢຊູເຈົ້າຜູ້ມີໃຈຍາກຈົນແລະສຸພາບ, ຜູ້ເຕັມພຽບດ້ວຍຄວາມຮັກເມດຕາ. ພຣະອົງຮັກພວກລູກແລະປາດຖະໜາໃຫ້ພວກລູກມີຄວາມສຸກ. ດັ່ງທີ່ພຣະອົງກ່າວວັນນີ້ວ່າ: "ພວກເຈົ້າທັງຫລາຍຜູ້ທົນທຸກແລະແບກໜັກ ຈົ່ງມາຫາເຮົາ, ເຮົາຈະທຸເລົາເບົາໃຈພວກເຈົ້າ". ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ